ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທະນາຄານແຫ່ງ ສປປ ລາວ ເຜີຍແຜ່-ເຊື່ອມຊຶມ ເອກະສານສຳຄັນຕ່າງໆຂອງພັກ-ລັດ ແລະ ສະຫຼຸບບັ້ນແຂ່ງຂັນຮັກຊາດ ແລະ ພັດທະນາ




ໃນຕອນເຊົ້າຂອງວັນທີ 20 ທັນວາ 2022 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເຜີຍແຜ່-ເຊື່ອມຊຶມເອກະສານສຳຄັນຕ່າງໆຂອງພັກ-ລັດແລະສະຫຼຸບບັ້ນແຂ່ງຂັນຮັກຊາດແລະພັດທະນາ"ທີ່ຫ້ອງປະຊຸມທະນາຄານທີ່ ສະຖາບັນການທະນາຄານ. ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ບຸນເຫຼືອ ສິນໄຊວໍລະວົງ ເລຂາຄະນະບໍລິຫານງານພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ), ມີບັນດາສະຫາຍກຳມະການພັກ ທຫລ, ມີຄະນະກົມ-ຄະນະອຳນວຍການທະນາຄານທຸລະກິດ ແລະ ພະນັກງານ-ສະມາຊິກພັກຫຼັກແຫຼ່ງທີ່ກ່ຽວຂ້ອງທີ່ຫ້ອງປະຊຸມທະນາຄານເຂົ້າຮ່ວມ.

ໃນກອງປະຊຸມຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່-ເຊື່ອມຊຶມເອກະສານສຳຄັນຕ່າງໆຂອງພັກ-ລັດຄື: ການເຜີຍແຜ່ມະຕິກອງປະຊຸມຄົບຄະນະ ຄັ້ງທີ 5 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI, ເຜີຍແຜ່ຄຳສັ່ງແນະນຳກ່ຽວກັບການຜັນຂະຫຍາຍຜົນສຳເລັດກອງປະຊຸມວຽກງານກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານພັດທະນາຊົນນະບົດຮອບດ້ານແກ້ໄຂຄວາມທຸກຍາກແລະວຽກງານ 3 ສ້າງ ສະບັບເລກທີ 233/ຄລສພ ລົງວັນທີ 07 ພະຈິກ 2022, ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງຮາກຖານການເມືອງຕິດພັນກັບວຽກງານພັດທະນາຊົນນະບົດຮອບດ້ານແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງໄລຍະຜ່ານມາ ( 2016 - 2021 ) ແລະ ທິດທາງປີ2025, ເຜີຍແຜ່ມະຕິຕົກລົງວ່າດ້ວຍການເພີ່ມ

ທະວິວຽກງານແຂ່ງຂັນ-ຍ້ອງຍໍໄລຍະໃໝ່ ສະບັບ 01 /ກມສພ ລົງວັນທີ 20 ມັງກອນ 2010 ພາຍໃຕ້ຄຳຂວັນ "ຮັກຊາດ ແລະ ພັດທະນາ", ເຜີຍແຜ່ລັດຖະດຳລັດວ່າດ້ວຍການເປີດຂະບວນການແຂ່ງຂັນ-ຍ້ອງຍໍທົ່ວປະເທດໃນໄລຍະໃໝ່ສະບັບເລກທີ 011/ປປທ ລົງວັນທີ 20 ມັງກອນ 2010, ເຜີຍແຜ່ດຳລັດວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ສະບັບເລກທີ 01/ພນ ລົງວັນທີ 07 ກຸມພາ 2020, ສະເໜີຮ່າງບົດສະຫຼຸບການຈັດຕັ້ງປະຕິບັດບັ້ນແຂ່ງຂັນຮັກຊາດ ແລະ ພັດທະນາທົ່ວຂະແໜງທະນາຄານນັບແຕ່ ປີ 2014-2021, ສະເໜີຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳການແຂ່ງຂັນ-ຍ້ອງຍໍຮັກຊາດ ແລະພັດທະນາ ທຫລ, ສະເໜີຜ່ານເນື້ອໃນຂໍ້ແຂ່ງຂັນຮັກຊາດແລະພັດທະນາຂອງ ທຫລ ແລະ ຈັບມືການແຂ່ງຂັນ, ພ້ອມນີ້ຍັງໄດ້ມີພິທີມອບໃບຍ້ອງຍໍ ແລະ ໃບຊົມເຊີຍຂອງບຸກຄົນພະນັກງານ ທຫລ ປະຈຳປີ 2021.




ໃນກອງປະຊຸມໄດ້ມີການປະກາດການຕົກລົງຂອງຂັ້ນເທິງ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງຂັ້ນສູງຂອງ ທຫລ ຄື: ແຕ່ງຕັ້ງ ສະຫາຍ ນາງ ວັດທະນາ ດາລາລອຍ ກຳມະການປະຈຳພັກ, ປະທານຄະນະກວດກາພັກ ທຫລ ເປັນຮອງເລຂາຄະນະບໍລິຫານງານພັກ ທຫລ ແລະ ແຕ່ງຕັ້ງ ສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງົາ ກຳມະການປະຈຳພັກ ທຫລ, ຫົວໜ້າກົມນະໂຍບາຍເງິນຕາ ເປັນຮອງຜູ້ວ່າການ ທຫລ. ພ້ອມດຽວກັນນີ້, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກສະຫາຍເລຂາຄະນະບໍລິຫານງານພັກ ທຫລ ເຮັດໃຫ້ກອງປະຊຸມໃນຄັ້ງນີ້ໄດ້ສຳເລັດຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້ຢ່າງຈົບງາມ.

**# ຂ່າວ ແລະ ພາບ: ໜ່ວຍງານຂ່າວສານ, ທຫລ.**

## ຢູ່ເມືອງລາວ ໃຊ້ແຕ່ເງິນກີບ